# ກຳມະບານຮາກຖານທະນາຄານແຫ່ງ ສປປລາວ

# ຍົກສູງວຽກງານການເມືອງແນວຄິດ



**ຂ່າວ - ພາບ : ຣັດສະໝີ ດວງສັດຈະ**

ໃນວັນທີ 9 ກໍລະກົດ ຜ່ານມາທີ່ຫ້ອງປະຊຸມທະນາຄານແຫ່ງ ສປປລາວ ( ທຫລ ), ຄະນະກຳມະບານຮາກຖານ ທຫລ ໄດ້ຈັດຕັ້ງການປາຖະກະຖາພາລະກຳປະຫວັດສາດ, ພາລະບົດບາດ ແລະ ໜ້າທີ່ຂອງກຳມະບານໃນໄລຍະໃໝ່ໂດຍການໃຫ້ກຽດບັນຍາຍຂອງສະຫາຍ ອາລຸນ ບຸນຍົງ ປະທານຄະນະກຳມະບານຮາກຖານ ທຫລ ເຊິ່ງມີພະນັກງານ - ສະມາຊິກກຳມະບານ ແລະ ມະຫາຊົນກ້າວໜ້າເຂົ້າຮ່ວມຢ່າງພ້ອມພຽງ ທັງນີ້ກໍ່ເພື່ອເປັນການຂ່ຳນັບຊົມເຊີຍກອງປະຊຸມໃຫຍ່ຄັ້ງທີ VI ຂອງສະຫະພັນກຳມະບານ ທຫລ ແລະ ວັນສ້າງຕັ້ງແນວລາວສ້າງຊາດຄົບຮອບ 60 ປີ.

ໃນການປາຖະກະຖາຄັ້ງນີ້, ສະຫາຍປະທານກຳມະບານຮາກຖານ ທຫລ ໄດ້ຊີ້ໃຫ້ເຫັນເຖິງຂະບວນວິວັດແຫ່ງການເຕີບໃຫຍ່ ແລະ ເຂັ້ມແຂງຂອງອົງການຈັດຕັ້ງກຳມະບານລາວ ເຊິ່ງເປັນອົງການຈັດຕັ້ງມະຫາຊົນທີ່ຢູ່ພາຍໃຕ້ການຊີ້ນຳໂດຍກົງຂອງພັກປະຊາຊົນປະຕິວັດລາວ,ພ້ອມນັ້ນກໍຍົກໃຫ້ເຫັນພາລະບົດບາດ ແລະ ໜ້າທີ່ຂອງກຳມະບານລາວໃນໄລຍະໃໝ່ໃນເງື່ອນໄຂເສດຖະກິດຕະຫຼາດ ໂດຍມີການນຳພາຂອງພັກ ແລະ ມີການຄຸ້ມຄອງ

ຂອງລັດໂດຍສະເພາະແມ່ນການປະຕິບັດ 2 ດີ 5 ເປັນເຈົ້າ ຕາມຈິດໃຈຂອງກອງປະຊຸມໃຫຍ່ຜູ້ແທນກຳມະບານລາວ ໃນທົ່ວປະເທດຮັບຮອງເອົາ, ນອກນີ້ສະຫາຍ ປະທານຍັງໄດ້ຮຽກຮ້ອງໃຫ້ບັນດາພະນັກງານ ແລະ ສະມາຊິກກຳມະບານຈົ່ງສືບຕໍ່ມູນເຊື້ອອັນດີເດັ່ນຂອງຕົນ, ເຊີດຊູຄວາມສາມັກຄີພາຍໃນໃຫ້ແໜ້ນແຟ້ນອ້ອມຂ້າງພັກ ແລະ ສືບຕໍ່ເຮັດໜ້າທີ່ດ້ວຍຄວາມຮັບຜິດຊອບສູງ ນຳເອົາຜົນສຳເລັດມາໃຫ້ກົມກອງຕາມທິດຊີ້ນຳຂອງຄະນະພັກ-ຄະນະທະນາຄານແຫ່ງ ສປປລາວ ກຳນົດໄວ້.

ການປາຖະກະຖາ ໃນຄັ້ງນີ້ໄດ້ດຳເນີນມາເປັນເວລາເຄິ່ງມື້ອັນໄດ້ເຮັດໃຫ້ທຸກຄົນສາມາດກຳແໜ້ນ ແລະ ຮັບຮູ້ໄດ້ຄວາມໝາຍ-ຄວາມສຳຄັນ ແລະ ພາລະບົດບາດໜ້າທີ່ຂອງອົງການຈັດຕັ້ງກຳມະບານ ແລະ ໄດ້ກາຍເປັນເຂັມທິດໃຫ້ແກ່ການເຄື່ອນໄຫວໃນຕໍ່ໜ້າໃຫ້ໄດ້ຮັບຜົນດີຍິ່ງໆຂຶ້ນ.